ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດປະຊາທິປະໄຕ ເອກະພາບວັດທະນະຖາວອນ

ທະນາຄານແຫ່ງສປປລາວ

ກົມເຕັກໂນໂລຊີຂໍ້ມູນຂ່າວສານ

ເລກທີ 496 /ກຕຂ

ນະຄອນຫຼວງວຽງຈັນ, ວັນທີ 11 ເມສາ 2018

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະກົມ ກົມເຕັກໂນໂລຊີຂໍ້ມູນຂ່າວສານ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ສະບັບເລກທີ 600/ທຫລ, ລົງວັນທີ 12 ກໍລະກົດ 2013.
- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງຄະນະກົມຄັ້ງວັນທີ 09 ເມສາ 2018.

**ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ ຕົກລົງ:**

**ມາດຕາ 1.** ການແບ່ງໜ້າທີ່ຮັບຜິດຊອບຂອງຄະນະກົມ, ກົມເຕັກໂນໂລຊີຂໍ້ມູນຂ່າວສານ ຕາມລາຍລະອຽດດັ່ງນີ້:

1. ທ່ານ ໄຊ່ແກ້ວ ຫຼວງສີວິໄລ ຮັກສາການຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊີ້ນຳລວມວຽກງານຮອບດ້ານຂອງກົມ, ລົງເລິກວຽກງານການເມືອງ-ແນວຄິດ, ການຈັດຕັ້ງ ແລະ ພະນັກງານ.
   - ລົງເລິກຊີ້ນຳວຽກງານພະແນກຂໍ້ມູນສິນເຊື່ອ.
   - ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະຜູ້ວ່າການ ທະນາຄານ ແຫ່ງ ສປປ ລາວ.
2. ທ່ານ ພຸດສາລາ ອິນດາລາ ຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊ່ວຍວຽກຫົວໜ້າກົມ ໃນການຊີ້ນຳ-ນຳພາວຽກງານລວມຂອງກົມ.
   - ລົງເລິກຊີ້ນຳວຽກງານພະແນກ ຄຸ້ມຄອງບັດ ແລະ ພະແນກ ຊຳລະສະສາງເອເລັກໂຕຣນິກ.
   - ລົງເລິກຊີ້ນຳວຽກງານ 3 ອົງການຈັດຕັ້ງມະຫາຊົນຂອງກົມ.
   - ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.
3. ທ່ານ ລັດສະໝີ ສຸວັນທອງ ຮອງຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ
   - ຮັບຜິດຊອບຊ່ວຍວຽກຫົວໜ້າກົມ ໃນການຊີ້ນຳ-ນຳພາວຽກງານລວມຂອງກົມ.
   - ລົງເລິກຊີ້ນຳວຽກງານ ພະແນກ ບໍລິຫານຂໍ້ມູນ ແລະ ບຳລຸງຮັກສາ, ພະແນກ ພັດທະນາໂປຣແກຣມ ແລະ ພະແນກຄຸ້ມຄອງເຄືອຂ່າຍ ແລະ ແມ່ຂ່າຍ.
   - ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າກົມ.

**ມາດຕາ 2.** ບັນດາທ່ານທີ່ໄດ້ຮັບການແບ່ງໜ້າທີ່ຮັບຜິດຊອບ, ບັນດາພະແນກ ແລະ ພະນັກງານທັງໝົດພາຍໃນກົມເຕັກໂນໂລຊີຂໍ້ມູນຂ່າວສານ ຈົ່ງຮັບຊາບ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ເປັນຢ່າງດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ແທນ ສະບັບ ເລກທີ 50/ກຕຂ, ລົງວັນທີ 05 ມັງກອນ 2017.

**ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ**

ໄຊ່ແກ້ວ ຫຼວງສີວິໄລ